**ມິຊຊາອາທິດທີ 17 ກຳມະດາ**

**ວັນທີ 24 ກໍລະກົດ 2022**



**ພຣະວໍລະສານໂດຍນັກບຸນລູກາ 11, 1-13**

ມື້ໜຶ່ງ, ພຣະເຢຊູເຈົ້າກຳລັງສວດພາວະນາ. ເມື່ອສວດພາວະນາແລ້ວ ກໍມີສາວົກຜູ້ໜຶ່ງມາທູນພຣະອົງວ່າ: ພຣະອາຈານເອີຍ, ໂຜດສອນພວກຂ້ານ້ອຍສວດຄືທ່ານຢວງບັບຕິສຕາໄດ້ສອນລູກສິດຂອງເພິ່ນນັ້ນເທີ້ນ. ພຣະອົງຕອບວ່າ: ເມື່ອພວກເຈົ້າສວດພາວະນາໃຫ້ວ່າດັ່ງນີ້: ໂອພຣະບິດາເຈົ້າ, ຂໍໃຫ້ພຣະນາມຮຸ່ງເຮືອງໄປ. ເມືອງພຣະອົງໃຫ້ມາເຖິງ. ອາຫານປະຈຳວັນຂໍທານໃຫ້ໃນວັນນີ້. ຂໍໂຜດບາບໃຫ້ພວກຂ້າພະເຈົ້າ ຍ້ອນພວກຂ້າພະເຈົ້າໄດ້ໃຫ້ອະໄພແກ່ຜູ້ທີ່ທຳຜິດຕໍ່ພວກຂ້າພະເຈົ້າ. ຂໍຢ່າປະພວກຂ້າພະເຈົ້າໃນຍາມຖືກຫລອກລວງ.

ແລ້ວພຣະອົງກ່າວອີກວ່າ: ຖ້າຫາກຜູ້ໜຶ່ງໃນພວກເຈົ້າມີສ່ຽວຜູ້ໜຶ່ງມາຫາໃນຍາມເດິກທ່ຽງຄືນແລະເວົ້າວ່າ: ສ່ຽວເອີຍ, ເຮົາຂໍຢືມເຂົ້າຈີ່ຈັກສາມກ້ອນແດ່ ຍ້ອນວ່າສ່ຽວເຮົາຜູ້ໜຶ່ງມາແຕ່ທາງໄກແລະເຮົາບໍ່ມີຫຍັງໃຫ້ເຂົາກິນ. ຖ້າສ່ຽວຜູ້ຢູ່ໃນເຮືອນຕອບວ່າ: ຢ່າມາກວນ, ປະຕູອັດໝົດແລ້ວ, ລູກເຕົ້າແລະເຮົາເຂົ້ານອນໝົດແລ້ວ. ເຮົາລຸກໄປເອົາເຂົ້າຈີ່ມາໃຫ້ໂຕບໍ່ໄດ້.

ເຮົາບອກພວກເຈົ້າວ່າ: ແມ່ນເຂົາບໍ່ລຸກຂຶ້ນໄປເອົາເຂົ້າຈີ່ມາໃຫ້ໃນຖານເປັນສ່ຽວກັນກໍຕາມ, ແຕ່ເຂົາຈະລຸກຂຶ້ນຍ້ອນສ່ຽວຜູ້ນັ້ນມາລົບກວນແລະຈະຫາເອົາທຸກສິ່ງທີ່ຕ້ອງການນັ້ນມາໃຫ້. ສ່ວນເຮົາ, ເຮົາບອກພວກເຈົ້າວ່າ: ຈົ່ງຂໍແລະຈະໄດ້. ຈົ່ງຫາແລະຈະພໍ້. ຈົ່ງເຄາະປະຕູແລະເຂົາຈະໄຂເອົາ. ຍ້ອນວ່າຜູ້ໃດຂໍ ກໍໄດ້ຮັບ. ຜູ້ໃດຊອກຫາ ກໍພົບເຫັນ. ແລະຜູ້ໃດເຄາະປະຕູ ກໍຈະໄຂຮັບເອົາ.

ມີຜູ້ເປັນພໍ່ຄົນໃດໃນພວກເຈົ້າ ເມື່ອເຫັນລູກມາຂໍເຂົ້າຈີ່ຈະເອົາກ້ອນຫີນໃຫ້ຕາງ. ແລະເມື່ອລູກມາຂໍປາຈະເອົາງູໃຫ້ບໍ? ຫລືຖ້າລູກຂໍໄຂ່ຈະເອົາແມງງອດໃຫ້ບໍ? ດັ່ງນີ້, ຖ້າວ່າພວກເຈົ້າຜູ້ເປັນຄົນຊົ່ວຍັງຮູ້ຈັກຫາແນວດີມາໃຫ້ລູກແລ້ວ, ພຣະບິດາເຈົ້າສະຫວັນແຮງຈະປະທານພຣະຈິດເຈົ້າແກ່ຜູ້ທີ່ວອນຂໍພຣະອົງນັ້ນກວ່າອີກ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ**

ບົດອ່ານທັງສາມບົດວັນນີ້ລ້ວນແຕ່ກ່າວເຖິງຄວາມເຊື່ອໝັ້ນໃນຄຳພາວະນາ. ໃນບົດອ່ານທີໜຶ່ງ, ເມື່ອພຣະເຈົ້າມີພຣະປະສົງຢາກທຳລາຍເມືອງໂຊດົມແລະໂກມໍຍ້ອນຄວາມຊົ່ວຮ້າຍຂອງພວກຄົນບາບໃນສອງເມືອງນີ້. ອາບຣາຮາມໄດ້ວອນຂໍພຣະເຈົ້າໃຫ້ຄິດເຖິງຄວາມຮັກເມດຕາຂອງພຣະອົງທີ່ມີຕໍ່ປະຊາກອນຂອງພຣະອົງແລະຢ່າທຳລາຍເມືອງໂຊດົມອີກເລີຍ. ທ້າຍສຸດ, ອາໄສຄວາມເຊື່ອໝັ້ນໃນຄຳພາວະນາວອນຂໍຂອງອາບຣາຮາມ, ພຣະເຈົ້າໄດ້ປ່ຽນໃຈແລະບໍ່ທຳລາຍເມືອງໂຊດົມອີກ.

ສ່ວນໃນພຣະວໍລະສານ, ເມື່ອພວກລູກສິດຂໍໃຫ້ພຣະເຢຊູເຈົ້າສອນພວກເຂົາໃຫ້ພາວະນາຫາພຣະບິດາເໝືອນກັບພຣະອົງ. ພຣະອົງກໍໄດ້ສອນພວກເຂົາໃຫ້ສວດບົດໂອພຣະບິດາແລະສອນພວກເຂົາໃຫ້ມີຄວາມເຊື່ອໝັ້ນແລະຄວາມພຽນໃນຄຳພາວະນາ. ເພາະຖ້າຜູ້ໃດຂໍ, ຜູ້ນັ້ນຈະໄດ້ຮັບ. ແລະຖ້າຜູ້ໃດເຄາະ, ກໍຈະມີຜູ້ໄຂຮັບເອົາ. ໝາຍວ່າພຣະເຈົ້າສະດັບຟັງແລະປະທານໃຫ້ພວກເຮົາສະເໝີ ຖ້າພວກເຮົາວອນຂໍພຣະອົງດ້ວຍຄວາມເຊື່ອ. ເພາະບໍ່ມີຫຍັງທີ່ພຣະເຈົ້າຈະກະທຳບໍ່ໄດ້. ແມ່ນແຕ່ສິ່ງທີ່ມະນຸດທັງມວນຢ້ານກົວທີ່ສຸດຄືຄວາມຕາຍ, ພຣະອົງກໍຍັງຊະນະມັນໄດ້. ດ້ວຍເຫດນີ້, ຖ້າພວກເຮົາເຊື່ອໃນພຣະອົງ ພວກເຮົາກໍຈະໄດ້ຊະນະຄວາມຕາຍເໝືອນກັບພຣະອົງ. ດັ່ງທີ່ນັກບຸນເປົາໂລກ່າວໃນບົດອ່ານທີສອງຂອງວັນນີ້.

ແລະບໍ່ມີພໍ່ຄົນໃດໃນໂລກທີ່ບໍ່ຮັກແພງລູກເຕົ້າຂອງຕົນ. ຍິ່ງໄປກວ່ານັ້ນ, ພຣະບິດາຂອງພວກເຮົາຢູ່ສະຫວັນຈະບໍ່ຮັກແພງພວກເຮົາຜູ້ເປັນລູກຂອງພຣະອົງບໍ. ດ້ວຍເຫດນີ້, ໃຫ້ພວກເຮົາເຊື່ອໝັ້ນໃນຄວາມຮັກຂອງພຣະອົງ. ເພາະຖ້າພຣະບິດາເຈົ້າບໍ່ຮັກພວກເຮົາ, ພຣະອົງກໍຈະບໍ່ສົ່ງລູກຊາຍດຽວຂອງພຣະອົງຄືພຣະເຢຊູກຣິສໂຕລົງມາຕາຍເພື່ອພວກເຮົາ. ຖ້າລູກຊາຍດຽວຂອງພຣະເຈົ້າ, ພຣະອົງຍັງປະທານໃຫ້ພວກເຮົາແລ້ວ, ຍັງຈະມີສິ່ງໃດອີກທີ່ສຳຄັນແລະມີຄ່າກວ່າລູກຊາຍຂອງພຣະເຈົ້າອີກບໍທີ່ພຣະອົງບໍ່ປະທານໃຫ້ພວກເຮົາ.

ສ່ວນພວກເຮົາເດ, ພວກເຮົາຮັກພຣະອົງຢູ່ບໍ? ພວກເຮົາເຊື່ອໝັ້ນໃນພຣະອົງບໍ? ພວກເຮົາມີຄວາມພາກພຽນໃນຄຳພາວະນາບໍ?

**ພາວະນາ**

ໂອພຣະເຢຊູເຈົ້າ ໂຜດສອນລູກໃຫ້ຮູ້ຈັກພາວະນາເໝືອນກັບພຣະອົງ. ໂຜດສອນລູກໃຫ້ມີຄວາມເຊື່ອໝັ້ນໃນພຣະບິດາເຈົ້າສະຫວັນເໝືອນກັບພຣະອົງ. ແລະໂຜດສອນລູກໃຫ້ມີຄວາມໄວ້ວາງໃຈຢ່າງແທ້ຈິງໃນພຣະບິດາເໝືອນກັບພຣະອົງ. ເພື່ອລູກຈະໄດ້ເປັນລູກທີ່ດີຂອງພຣະບິດາເຈົ້າເໝືອນກັບພຣະອົງດ້ວຍເທີ້ນ. ອາແມນ

ຄຸນພໍ່ ອົງຕວນ ກຽດຕິສັກ